**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 5

## General knowledge on the government's policy to the task of enforcement and court judgement

## ຄວາມຮູ້ທົ່ວໄປກ່ຽວກັບນະໂຍບາຍຂອງລັດຕໍ່ວຽກງານປະຕິບັດຄຳຕັດສິນຂອງສານ

### 1. ການເຄື່ອນໄຫວຂອງລັດໃນການປັບປຸງວຽກງານປະຕິບັດຄຳຕັດສິນຂອງສານຢູ່ ສປປ ລາວ

- ໄລຍະແຕ່ປີ 1991-2004 ລັດຖະບານຂອງ ສປປ ລາວ ໄດ້ຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ຕາມລັດຖະທຳມະນູນ ສະບັບປີ 1991 ແລະ ກົດໝາຍວ່າດ້ວຍການສ້າງຕັ້ງສານປະຊາຊົນ ສະບັບປີ 1989 ການປະຕິບັດຄຳຕັດສິນຂອງສານ ໃນສ່ວນທີ່ກະຊວງຍຸຕິທຳຮັບຜິດຊອບເປັນໜ້າທີ່ຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງຍຸຕິທຳ ບັນດາພະນັກງານດັ່ງກ່າວ ແມ່ນປະຈຳຢູ່ສານປະຊາຊົນແຂວງ, ນະຄອນ ແລະ ເມືອງເພື່ອກຽມປະຕິບັດຄຳຕັດສິນຂອງສານ ຂັ້ນທີ່ກ່ຽວຂ້ອງ ແລະ ໃນທ້ອງຖິ່ນທີ່ກ່ຽວຂ້ອງ ຕາມຫຼັກການແລ້ວພະນັກງານປະຕິບັດຄຳຕັດສິນຂອງສານ ແມ່ນຢູ່ພາຍໃຕ້ການຄຸ້ມຄອງທາງດ້ານວິຊາການຂອງກົມຄຸ້ມຄອງລະບົບຍຸຕິທຳ ພາຍໃຕ້ການຊີ້ນຳຂອງລັດຖະມົນຕີກະຊວງຍຸຕິທຳ;

- ໄລຍະແຕ່ປີ 2004 ເຖິງປັດຈຸບັນ ພາຍຫຼັງທີ່ໄດ້ສັງເກດເຫັນວ່າສະພາບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງຮັບຜິດຊອບໂດຍພະນັກງານປະຕິບັດນັບມື້ນັບຂາດປະສິດທິພາບ, ເຮັດຄຳຕັດສິນຈຳນວນຫຼວງຫຼາຍບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງທັນການ ຄຽງຄູ່ກັນນັ້ນການປະສານສົມທົບລະຫວ່າງພາກສ່ວນທີ່ກ່ຽວຂ້ອງຍັງເຮັດບໍ່ທັນໄດ້ດີ ຈຶ່ງເຮັດໃຫ້ຄຳຕັດສິນຂອງສານຈຳນວນໜຶ່ງບໍ່ສາມາດນຳໄປຈັດຕັ້ງປະຕິບັດໄດ້ ຫຼື ຈັດຕັ້ງປະຕິບັດບໍ່ຖືກຕ້ອງ, ບັນຫາທີ່ມີລັກສະນະຫຍໍ້ທໍ້ ຊຶ່ງເກີດຈາກການປະຕິບັດຄຳຕັດສິນຂອງສານ ເປັນຜົນກະທົບຕໍ່ຄວາມສັກສິດຂອງກົດໝາຍ ກໍຄືຄວາມເຊື່ອໝັ້ນຂອງສັງຄົມຕໍ່ສິດອຳນາດຂອງສານປະຊາຊົນ ດັ່ງນັ້ນ, ໃນປີ 2000 ລັດຖະບານກໍຄື ກະຊວງຍຸຕິທຳ ຈຶ່ງໄດ້ປັບປຸງວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານຄືນໃໝ່ດ້ວຍການສ້າງຕັ້ງກົມຈັດຕັ້ງປະຕິບັດຄຳຕັດສິນຂອງສານຂຶ້ນ ເພື່ອຄຸ້ມຄອງ ແລະ ຊີ້ນຳວຽກງານດັ່ງກ່າວໂດຍກົງ ສຳລັບຢູ່ທ້ອງຖິ່ນກໍໄດ້ສ້າງຕັ້ງເປັນຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ຂັ້ນແຂວງ, ນະຄອນ ແລະ ຂັ້ນເມືອງຕາມລຳດັບ;

- ການປັບປຸງໃໝ່ທາງດ້ານການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກເຮັດໃຫ້ຄຸນນະພາບຂອງວຽກງານດັ່ງກ່າວໄດ້ຍົກສູງຂຶ້ນກ່ວາໄລຍະທີ່ຜ່ານມາ ແລະ ເພື່ອເປັນການເພີ່ມທະວີວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ນັບມື້ເຂັ້ມງວດ, ເດັດຂາດ, ມີປະສິດທິຜົນ ຈຶ່ງໄດ້ປະກາດໃຊ້ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນປີ 2004 ແລະ ລັດຖະບານໄດ້ປັບປຸງໃນປີ 2008 ຊຶ່ງເປັນພື້ນຖານທາງດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຮັບປະກັນການປົກປ້ອງສິດຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງ.

ໃນໄລຍະຜ່ານມາ ລັດຖະບານກໍຄືກະຊວງຍຸຕິທຳ ໄດ້ມີຄວາມພະຍາຍາມປັບປຸງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຕ່ເທິງລົງລຸ່ມ, ໂດຍສະເພາະແມ່ນໄດ້ສັບຊ້ອນ, ຈັດວາງພະນັກງານປະກອບໃຫ້ກົມ, ຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຈຳນວນໜຶ່ງໂດຍຕິດພັນກັບການປັບປຸງລະບອບແບບແຜນວິທີເຮັດວຽກ, ປັບປຸງກົນໄກການປະສານສົມທົບໂດຍສະເພາະຄະດີໃດທີ່ເປັນຄະດີຫຍຸ້ງຍາກ, ສັບສົນກໍໄດ້ມີການສົມທົບ, ປຶກສາຫາລືກັບພາກສ່ວນກ່ຽວຂ້ອງເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານມີຄວາມເປັນເອກະພາບ ແລະ ມີຄວາມສັກສິດຫຼາຍຂຶ້ນ[1]

## 2. ນະໂຍບາຍລວມຂອງລັດຕໍ່ວຽກງານປະຕິບັດຄຳຕັດສິນຂອງສານ

ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີບົດບາດໃນການຮັບປະກັນຄວາມຍຸຕິທຳ ທີ່ໄດ້ກຳນົດອອກໃນຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ວຽກງານດັ່ງກ່າວນີ້ ລັດແຫ່ງ ສປປ ລາວ ໄດ້ກຳນົດນະໂຍບາຍລວມໂດຍຜ່ານການເອົາໃຈໃສ່ສ້າງຕັ້ງ ແລະ ປັບປຸງອົງການທີ່ມີໜ້າທີ່ຮັບຜິດຊອບຢ່າງຕັ້ງໜ້າຕະຫຼອດມາ.

ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ສ້າງຂຶ້ນໂດຍລັດຖະບານ: ໄດ້ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານທາງແພ່ງ;ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຕ່ສູນກາງລົງຮອດທ້ອງຖິ່ນ ລວມທັງສິດ ແລະ ໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ແນໃສ່ເຮັດໃຫ້ຄຳຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ ແລະ ເປັນເອກະພາບໃນທົ່ວປະເທດ; ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍ; ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງລວມໝູ່ ແລະ ພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳ[2].

ໂດຍອີງໃສ່ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2016-2020) ຄັ້ງທີ VIII ຂອງລັດຖະບານ, ຍຸດທະສາດການສ້າງລັດແຫ່ງ ສປປ ລາວ ໃຫ້ກາຍເປັນລັດທີ່ ປົກຄອງດ້ວຍກົດໝາຍເທື່ອລະກ້າວ, ລັດຖະບານໄດ້ກຳນົດນະໂຍບາຍລວມ ຕໍ່ກັບວຽກງານປະຕິບັດຄຳຕັດສິນຂອງສານດັ່ງນີ້:

1). ການດຳເນີດຄະດີຕາມຂະບວນການຍຸຕິທຳ ຕ້ອງຮັບປະກັນຄວາມໂປ່ງໃສ, ຖືກຕ້ອງ, ເປັນທຳ ແລະ ມີປະສິດທິພາບ, ຂອງພົນລະເມືອງຕໍ່ໜ້າກົດໝາຍ, ຜູ້ທີ່ລະເມີດຕ້ອງຮັບປະກັນການລົງໂທດ ຫຼື ໃຊ້ແທນຄ່າເສັຍຫາຍ, ການແກ້ໄຂຂໍ້ຂັດແຍ່ງ ຕ້ອງຮັບປະກັນຄວາມຖືກຕ້ອງສອດຄ່ອງ ຕາມລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດທັງຖືກຕ້ອງກັບຄວາມເປັນຈິງ ໂດຍຖືເອົາການສຶກສາອົບຮົມ ເປັນພື້ນຖານ, ເອົາການໄກ່ເກ່ຍເປັນວິທີການແກ້ໄຂໃນ

---

[1] ບົດລາຍງານຂອງລັດຖະມົນຕີກະຊວງຍຸຕິທຳກ່ຽວກັບວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ, ຊຸດທີ VIII (ຄັ້ງວັນທີ 25/10/2017), ໜ້າ 2.

[2] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 1.

ເບື້ອງຕົ້ນ, ເອົາການຕັດສິນຂອງສານ ເປັນກໍລະນີຫຼີກລ້ຽງບໍ່ໄດ້ ແລະ ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ເປັນມາດຕະການເດັດຂາດ.

2). ປັບກົງຈັກການຈັດຕັ້ງ ຂອງ ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໃຫ້ມີຄວາມປອດໃສ, ໜັກແໜ້ນ, ເອົາໃຈໃສ່ບໍາລຸງພະນັກງານປະຕິບັດຄໍາຕັດສິນຂອງສານ ໃຫ້ຮັບປະກັນຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ ແລະ ຄວາມຮູ້ຄວາມສາມາດ ພ້ອມທັງສັບຊ້ອນ, ຈັດວາງ ແລະ ນໍາໃຊ້ໃຫ້ແທດເໝາະກັບລະດັບຄວາມຮູ້ຄວາມສາມາດຂອງເຂົາເຈົ້າ.

3). ປັບປຸງລະບອບຕິດຕາມ, ກວດກາ, ປະເມີນຜົນຕໍ່ການປະຕິບັດຄໍາຕັດສິນຂອງສານ ໃຫ້ເປັນລະບົບ, ມີຄວາມຈະແຈ້ງ ແລະ ມີຄວາມສັກສິດ, ເຂັ້ມງວດ.

4). ສຸມໃສ່ສ້າງ, ປັບປຸງກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ໃຫ້ສອດຄ່ອງກັບແນວທາງປ່ຽນແປງໃໝ່, ສອດຄ່ອງກັບສະພາບການຂະຫຍາຍຕົວທາງເສດຖະກິດ-ສັງຄົມ ແລະ ການເຊື່ອມໂຍງກັບສາກົນໃນແຕ່ລະໄລຍະ ໃຫ້ເປັນລະບົບຮັດກຸມ, ກົມກຽວກັນ, ຮັບປະກັນຫຼັກວິຊາການ, ກໍານົດຈະແຈ້ງພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງບັນດາອົງການກ່ຽວຂ້ອງທີ່ມີສິດ, ໜ້າທີ່ຕິດຕາມ, ກວດກາ ຕໍ່ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ.

5). ເອົາໃຈໃສ່ບໍາລຸງ, ກໍ່ສ້າງຖັນແຖວ ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ, ທາງດ້ານຈໍານວນ ແລະ ຄຸນນະພາບ ໂດຍຖືສໍາຄັນການນໍາພາ ແລະ ກໍ່ສ້າງດ້ານຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຈັນຍາບັນ,ຈັນຍາທໍາ, ຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່, ມີນໍ້າໃຈຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດພຸດຜ່ອງ, ຕິດພັນກັບການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ຢ່າງເປັນມືອາຊີບ, ເປັນຜູ້ຊໍານານງານ ແລະ ຜູ້ຊ່ຽວຊານໃນແຕ່ລະດ້ານ.

6). ແກ້ໄຂປະກົດການປະຕິບັດໜ້າທີ່ ຂອງພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ທີ່ຖືເບົາຕໍ່ການນໍາໃຊ້ກົດໝາຍ, ການນໍາໃຊ້ຂໍ້ມູນຫຼັກຖານ, ການວິນິໄສທີ່ຂາດເຫດຜົນທາງດ້ານກົດໝາຍອັນເຮັດໃຫ້ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ເກີດມີຄວາມສັບສົນ ແລະ ບໍ່ສາມາດຈັດຕັ້ງປະຕິບັດໄດ້.

7). ປັບປຸງບູລະນະລະບົບການຈັດຕັ້ງ ຂອງອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໃຫ້ເປັນລະບົບຄົບຊຸດ, ມີຄວາມໜັກແໜ້ນ, ເຂັ້ມແຂງ ພ້ອມທັງປະກອບພື້ນຖານທາງດ້ານວັດຖຸເຕັກນິກ, ສິ່ງອໍານວຍຄວາມສະດວກດ້ານຕ່າງໆ ໃຫ້ບັນດາອົງການດັ່ງກ່າວສາມາດເຄື່ອນໄຫວປະຕິບັດພາລະບົດບາດ, ໜ້າທີ່ຂອງຕົນຢ່າງເຕັມສ່ວນ, ຮັບປະກັນກາາຈັດຕັ້ງປະຕິບັດຄໍາຕັດສິນຂອງສານໃຫ້ມີຄວາມວ່ອງໄວ, ຖືກຕ້ອງ ແລະ ເປັນທໍາ.

8). ຄົ້ນຄ້ວາ, ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ການແບ່ງຄວາມຮັບຜິດຊອບຕາມການແບ່ງຂັ້ນຄຸ້ມຄອງ ຂອງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຕ່ລະຂັ້ນ, ຕິດພັນກັບການສ້າງລະບົບກົນໄກການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ຈະແຈ້ງ ແລະ ຊັດເຈນ, ເພີ່ມທະວີການຊີ້ນຳ, ຄຸ້ມຄອງ, ກວດກາ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຢ່າງເປັນລະບົບ, ສົມທົບ ແລະ ປຶກສາຫາລື ກັບ ອົງການປົກຄອງທ້ອງຖິ່ນ ນຳໃຊ້ມາດຕະການຕາມກົດໝາຍ, ແກ້ໄຂຢ່າງເຂັ້ມງວດ ແລະ ເດັດຂາດຕໍ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ປະຕິບັດບໍ່ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ ຫຼື ຄຳຕັດສິນຂອງສານ, ກົດໜ່ວງທ່ວງດຶງ, ແກ່ຍາວການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ດ້ວຍທຸກຮູບການ, ປັບປຸງຖານຂໍ້ມູນຄຳຕັດສິນຂອງສານ ໃຫ້ເປັນລະບົບ, ຊັດເຈນ, ພ້ອມທັງຄົ້ນຄ້ວາ, ຊອກຫາສາເຫດ ແລະ ວິທີແກ້ໄຂ ບໍ່ໃຫ້ຄຳຕັດສິນຂອງສານ ບໍ່ສາມາດຈັດຕັ້ງປະຕິບັດໄດ້ອັ່ງອໍເພີ່ມຂຶ້ນອີກ.

**3. ທັດສະນະຂອງລັດຕໍ່ວຽກງານປະຕິບັດຄຳຕັດສິນຂອງສານ**

ໂດຍອີງຕາມແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ (2016-2020) ຄັ້ງທີ VIII ຂອງລັດຖະບານ, ຍຸດທະສາດການສ້າງລັດແຫ່ງ ສປປ ລາວ ໃຫ້ກາຍເປັນລັດທີ່ ປົກຄອງດ້ວຍກົດໝາຍເທື່ອລະກ້າວ, ລັດຖະບານໄດ້ມີທັດສະນະຕໍ່ວຽກງານປະຕິບັດຄຳຕັດສິນຂອງສານດັ່ງນີ້:

- ການດຳເນີນຄະດີຕາມຂະບວນການຍຸຕິທຳ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນການເພີ່ມທະວີການຄຸ້ມຄອງລັດຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດທະທຳມະນູນ ແລະ ກົດໝາຍ ພາຍໃຕ້ການນຳພາຂອງພັກ-ລັດ, ເນື້ອແທ້ແລ້ວກໍແມ່ນການປົກປັກຮັກສາໝາກຜົນຂອງການປະຕິວັດ ກໍຄືການປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງ, ແມ່ນການບູລະນະສັງຄົມໃໝ່ ທີ່ສີວິໄລ, ຮັບປະກັນຄວາມສາມັກຄີປອງດອງ ແລະ ຄວາມຍຸຕິທຳ; ອີກດ້ານອື່ນ ແມ່ນການສະແດງໃຫ້ເຫັນເຖິງການປະຕິບັດອຳນາດຜະເດັດການຂອງປະຊາຊົນ ຕໍ່ການຝືນປະຕິວັດ ກໍ່ຄືການມ້າງເພທຳລາຍຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ.

- ການດຳເນີນຄະດີຕາມຂະບວນການຍຸຕິທຳ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຮັບປະກັນການນຳພາ ຂອງພັກບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ ຮັບປະກັນລັກສະນະທາດແທ້ ຂອງລັດປະຊາທິປະໄຕປະຊາຊົນ ທີ່ມາຈາກປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະາຊົນ, ບົນຫຼັກການ "ອຳນາດລັດເປັນເອກະພາບ, ມີການແບ່ງງານໃຫ້ແຕ່ລະອົງການ ຢ່າງຈະແຈ້ງ" ສືບຕໍ່ກວດກາ ເພື່ອປັບປຸງກົນໄກ, ຂອດປະສານງານ, ລະບອບກວດກາເຊິ່ງກັນ ແລະ ກັນ ລະຫວ່າງສະພາແຫ່ງຊາດ, ສະພາປະຊາຊົນທ້ອງຖິ່ນ, ອົງການບໍລິຫານ ແລະ ອົງການຕຸລາການ ໃຫ້ຈະແຈ້ງ, ຊັດເຈນ, ດ້ານໜຶ່ງ ແມ່ນເພື່ອຮັບປະກັນໃຫ້ແຕ່ລະອົງການໄດ້ເຄື່ອນໄຫວຕາມພາລະບົດບາດ, ໜ້າທີ່ຂອງຕົນ, ສ່ວນອີກດ້ານໜຶ່ງກໍກວດກາຄວາມຮັບຜິດຊອບຂອງກັນ ແລະ ກັນ ແຕ່ບໍ່ແມ່ນໄປເຮັດໜ້າທີ່ແທນກັນ ຫຼື ແຊກແຊງ,

ກ້າວກາຍກັນ ແນໃສ່ແກ້ໄຂວົງຈອນການດຳເນີນຄະດີໃຫ້ມີຜົນສັກສິດ ແລະ ມີການສິ້ນສຸດ ຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດໄວ້ ດ້ວຍຄວາມຍຸຕິທຳ ແລະ ໂປ່ງໃສ.

- ການດຳເນີນຄະດີຕາມຂະບວນການຍຸຕິທຳ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຮັບປະກັນຄວາມໂປ່ງໃສ, ຖືກຕ້ອງ, ເປັນທຳ ແລະ ມີປະສິດທິພາບ, ຮັບປະກັນສິດສະເໝີພາບ ຂອງພົນລະເມືອງຕໍ່ໜ້າກົດໝາຍ, ຜູ້ທີ່ລະເມີດຕ້ອງໄດ້ຮັບການລົງໂທດ ຫຼື ໃຊ້ແທນຄ່າເສຍຫາຍ, ການແກ້ໄຂຂໍ້ຂັດແຍ່ງ ແລະ ການໃຊ້ແທນຄ່າເສຍຫາຍຕ້ອງຮັບປະກັນຄວາມຖືກຕ້ອງເປັນຈິງ ໂດຍຖືເອົາການສຶກສາອົບຮົມ ເປັນພື້ນຖານ, ເອົາການໄກ່ເກ່ຍເປັນວິທີການແກ້ໄຂໃນເບື້ອງຕົ້ນ, ເອົາການຕັດສິນຂອງສານ ເປັນກຳລະນີທີ່ຫຼີກລ້ຽງບໍ່ໄດ້ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເປັນມາດຕະການເດັດຂາດ.

- ຕ້ອງເສີມຂະຫຍາຍບົດບາດຕິດຕາມ, ກວດກາຂອງ ສະພາແຫ່ງຊາດ, ສະພາປະຊາຊົນທ້ອງຖິ່ນ, ອົງການໄອຍະການປະຊາຊົນ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ຕໍ່ກັບການປະຕິບັດໜ້າທີ່ ຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ພະນັກງານທີ່ຮັບຜິດຊອບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຮັບປະກັນໃຫ້ເຂົາເຈົ້າ ສະແດງອອກແຈ້ງທັດສນະຮັບໃຊ້ພັກ-ລັດ ຮັບໃຊ້ປະຊາຊົນ, ປົກປ້ອງຄວາມຖືກຕ້ອງ, ເປັນທຳ, ເດັດດ່ຽວແກ້ໄຂແນວຄິດອາຍາສິດ, ລ່ວງອຳນາດ, ມີສ່ວນໄດ້ສ່ວນເສຍໃນຄຳຕັດສິນຂອງສານ, ບິດເບືອນຄວາມຈິງ, ປົກປິດຄວາມຜິດ, ແບ່ງປັນຜົນປະໂຫຍດໂດຍກົງ; ໄປພ້ອມກັນກັບການເພີ່ມຄວາມເຂັ້ມງວດ, ເຄັ່ງຄັດຕໍ່ຂອດຄັດເລືອກ, ເລືອກເຟັ້ນ,  ນຳໃຊ້ພະນັກງານໃຫ້ຖືກຕ້ອງຕາມມາດຖານ, ເງື່ອນໄຂ ແລະ ຜ່ານການຝຶກຝົນລໍ່ຫຼອມ, ທົດສອບໃນວຽກງານຕົວຈິງ ກໍຕ້ອງກຳຈັດປັດເປົ່າ ແລະ ແກ້ໄຂສະພາບພະນັກງານ ເຂົ້າເຮັດວຽກໂດຍມີອຸດົມການການ ຂອງຊົນຊັ້ນຢ່າງຈະແຈ້ງ ແລະ ເດັດຂາດແກ້ໄຂຜູ້ມີບັນຫາ, ຜູ້ເສັຍທາດຂາດຄຸນອອກຈາກການຈັດຕັ້ງ ຕາມກົດໝາຍ ແລະ ລະບຽບວິໃນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

- ປັບປຸງທັດສະນະ, ຄວາມຮັບຮູ້ເຂົ້າໃຈ ຂອງຄະນະພັກຂັ້ນຕ່າງໆ ແລະ ອົງການອຳນາດລັດ ຕໍ່ການດຳເນີນຄະດີ ແລະ ການຈັດຕັ້ງປະຕິຄຳຕັດສິນຂອງສານ ຕາມຂະບວນການຄວາມຍຸຕິທຳ ບົນພື້ນຖານເຄົາລົບ ແລະ ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ, ເພີ່ມທະວີການນຳພາຊີ້ນຳ ຂອງພັກ ໃນການປັບປຸງ ແບບແຜນນຳພາວິທີເຮັດວຽກຂອງຄະນະພັກທຸກຂັ້ນ ຕໍ່ການດຳເນີນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມຂະບວນການຍຸຕິທຳ ໃຫ້ໄດ້ລະບຽບວິໃນ, ເຂັ້ມງວດການກວດກາ ຕໍ່ພະນັກງານ ໂດຍເນັ້ນໃສ່ການປະຕິບັດໜ້າທີ່ທີ່ບໍ່ຖືກຕ້ອງ, ລະເລີຍ, ເມີນເສີຍ ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທຳໃນວິຊາຊີບ. ຄະນະພັກ-ຄະນະນຳແຕ່ລະຂັ້ນຕ້ອງເປັນແບບຢ່າງນຳໜ້າໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ເດັດດ່ຽວຕ້ານ ກຳຈັດປັດເປົ່າປະກົດການຫຍໍ້ທໍ້, ການແຊກແຊງ, ຊີ້ນຳທີ່ບໍ່ຖືກຕ້ອງ ຂອງບຸກຄົນເຂົ້າໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ການລ່ວງລະເມີດກົດໝາຍຂອງຄະນະພັກຄະນະນຳແຕ່ລະຂັ້ນ, ຂອງພະນັກງານທຸກລະດັບລ້ວນແຕ່ຖືເປັນການລະເມີດ ແລະມີຄວາມຜິດດ້ານວິໃນ.

**References:**

1. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
2. ບົດລາຍງານຂອງລັດຖະມົນຕີກະຊວງຍຸຕິທຳກ່ຽວກັບວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕໍ່ກອງປະຊຸມສະໄໝສາມມັນເທື່ອທີ 4 ຂອງສະພາແຫ່ງຊາດ, ຊຸດທີ VIII (ຄັ້ງວັນທີ 25/10/2017), ໜ້າ 2;
3. ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ (2016-2020) ຄັ້ງທີ VIII ຂອງລັດຖະບານ.